# ຂ່າວປະເທສລາວ

## ວຽງຈັນໃຫມ່

<u>ແສດງລະຄຣຊ່ວຽປະເທສຝຣັ່ງ.</u>- ເມື່ອວັນສຸກຣ໌ທີ່ ໗ ອົກໂຕບຄນະລະຄຣລາວໄດ້ແສດງລະຄຣເລື້ອງນຶ່ງເພື່ອເກັບເງິນຊ່ວຽປະເທສຝຣັ່ງ. ທ່ານ ຜູ້ສໍາເລັຈລາຊະການ ປະເທສລາວໄດ້ເປັນປະທານໃນການແສດງຄັ້ງນີ້ລາຽລະອຽດດັ່ງລົງເປັນ:

- ແສດງຮູປ ທ່ານມາເຣຊາລ (ນັກຮຽນໂຮງຮຽນປົກຄອງລາວ ລ້ອງເພງຊາຕ)
- ຄໍາປາໄສຂອງເຈົ້າເມືອງພົນນະສອນ
- ເພັງເດັກນ້ອຍລາວ(ທໍານອງຂອງນາງແພທທອງດີ, ເນື້ອລ້ອງຂອງທ້າວທອງເພັຊແລະທ້າວຄໍາສີ)
- ລະຄຣເລື້ອງ "ເຈົ້າເທາຕ" ສາກທີ ໑
- ເພງ "ຈໍາປາເມືອງລາວ" (ທໍານອງຂອງທ້າວອຸຕະມະ, ເນື້ອລ້ອງຂອງມະຫາພົມ)
- ເຕັກນັງຟ້ອນລາວແບບໃຫມ່ (ນາງສາວທອງສຸນ ແລະ ເຈົ້າສະຫຍຣ ເປັນຜູ້ປະດິສ)
- ລະຄຣເລື້ອງ "ເຈົ້າເທາຕ" ສາກທີ ໒
- ບ່າວສາວລົງຄ່ວງ, ລ້ອງເພງລາວຮັກຊາຕ, ເຈົ້າສະຫຍຣກັບ

ໃນໂອກາສນີ້ໄດ້ມີການຂໍແດ່ສັທທາສໍາຫຼັບຊ່ວຍປະເທສຝຣັ່ງອີກ. ໄດ້ເງິນ ໑໘໕$ ເງິນຂາຍປີ້ລະຄຣລວມ ໑໕໐ ໃບ ເປັນເງິນ ໑໗໐$ ລວມເງິນທີ່ເກັບໄດ້ທັງຫມົດຈຶ່ງເປັນ ໓໐໕$.

ຄນະລະຄຣລາວຂໍແສດງຄວາມຂອບໃຈຢ່າງຍິ່ງມາຍັງທ່ານຜູ້ສໍາເລັຈລາຊະການ, ພຣະອົງຄ໌ເຈົ້າມະຫາອຸປະຮາຊ ແລະເຈົ້ານາຍຜູ້ໄດ້ມີສັທທາຢ່າງກວ້າງຂວາງທຸກຄົນ.

ເມື່ອວັນທີ່ ໑໑ ແລະ ໑໔ ອົກໂຕບໄດ້ມີການແສດງລະຄຣເລື່ອງເກົ່ານັ້ນອີກ, ເພື່ອເກັບເງິນອຸດຫນຸນກິຈການຟື້ນຟູຊາຕລາວ ແລະເພື່ອໃຫ້ນັກຮຽນທັງຫຼາຍມາຊົມ.

<u>ໂຮງຮຽນປາວີ</u>. - ປີນີ້ໂຮງຮຽນມັທະຍົມປາວີ ມີ ນັກຮຽນລວມ ໑໗໔ຄົນ, ຄົນຫຼາຍກວ່າປີກາຍປະມານ໒໐ຄົນ. ຫ້ອງກິນນອນເຕັມຫມົດທຸກບ່ອນ.

ທ່ານ ເລີມາເປັນຜູ້ອໍານວຽການ. ແຕ່ກ່ອນທ່ານ ຜູ້ນີ້ປະຈໍາການຢູ່ Lycée Allbert Sarraut Hanoi.

<u>ໂຮງຮຽນປົກຄອງລາວ</u>. - ຈໍານວນນັກຮຽນໂຮງຮຽນປົກຄອງລາວປີນີ້ ໒໕ ຄົນ. ເພິ່ນໄດ້ຈັດໃຫ້ມີການ ແປໜັງສືຝຣັ່ງເປັນລາວ

ມີຄວາມວິຕົກນໍາພີ່ນ້ອງຊາວບ
ເປັນອັນມາກ.

<u>ຕີປົ້ນ</u>. - ທີດຂາງບ້ານນາໂຄ
(ຫ່າງຈາກວຽງຈັນທາງ ໑໓ ກ.ມ.
ຖືກຕີປົ້ນໃນວັນທີ່໒໓ເຊຕານ.ເອົ
ຂອງເງິນທອງເສັຽຫາຍ ລວ
໒໓໕$.

ລາສະດຣໃນບ້ານໄດ້ພາກັນນໍ
ຈັບຜູ້ລ້າຍ. ຜູ້ລ້າຍຖືກຂ້າຕາ
ສອງຄົນ.

## ໜ້າແຂກ

<u>ຈາກໄປ</u>.- ທ່ານຮຸກົງ (M. H
gon) ທ່ານນາຍທະຫາ
ຮັກສາເມືອງໄດ້ຍ້າຍໄປປະ
ການທີ່ສາລະວັນ. ທ່ານຜູ້ນີ້
ລາຊະການໃນແຂວງຄໍາມ່ວນມີ
ຫມົດ ໕ ປີ. ທ່ານເປັນຜູ້ທີ່
ເຄີຍແລະຮັກໃຄ່ຂອງປະຊາລາ
ດຣລາວ ແລະທ່ານກຣັກຊອບ
ກັບຊາວລາວເຫມືອນກັນ.

ທ່ານລັກສອງ Giacomaggi
ຍ້າຍໄປປະຈໍາການທີ່ປາກ
ທ່ານເປັນຜູ້ມີອັທະຍາໄສໃຈ
ແລະມີຊື່ສຽງປາກົດທາງກໍລາ
ແຂວງຄໍາມ່ວນ.

<u>ມາຮອດ</u>.- ທ່ານລາຕຸແມ
(M, Lathoumette) ທ່ານນາ
ທະຫາຣຮັກສາເມືອງໄດ້